ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ມະຕິ

## ກອງປະຊຸມອົງການປົກຄອງແຂວງ
## 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2017

ກອງປະຊຸມອົງການປົກຄອງແຂວງ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2017 ໄດ້ດຳເນີນເປັນເວລາ 1 ວັນເຄິ່ງ ໃນວັນທີ 20-21 ມິຖຸນາ 2017 ຢູ່ທີ່ຫ້ອງປະຊຸມສຳນັກງານປົກຄອງແຂວງ, ພາຍໃຕ້ການເປັນປະທານຂອງ ທ່ານ ປອ ນາມ ວິຍະເກດ ເຈົ້າແຂວງອັດຕະປື, ຫົວໜ້າອົງການປົກຄອງແຂວງ, ມີບັນດາທ່ານໃນຄະນະອົງການປົກຄອງແຂວງ, ແຂກຖືກເຊີນຈາກພາກສ່ວນກ່ຽວຂ້ອງຂອງແຂວງ ແລະ ເມືອງ 5 ເມືອງ ເຂົ້າຮ່ວມທັງໝົດ 47 ທ່ານ, ຍິງ 4 ທ່ານ.

ກອງປະຊຸມ ໄດ້ມີການສະຫລຸບຕີລາຄາຄືນ ຜົນຂອງການຈັດຕັ້ງປະຕິບັດວຽກງານຂອງອົງການປົກຄອງແຂວງ ໃນໄລຍະ 6 ເດືອນຕົ້ນປີ 2017, ເຊິ່ງຢູ່ໃນໄລຍະຢູ່ເງື່ອນໄຂທາງດ້ານເສດຖະກິດ-ການເງິນ ຝືດເຄືອງ, ບັນດາໂຄງການລົງທຶນຂອງລັດຈຳນວນໜຶ່ງ ບໍ່ສາມາດເຄື່ອນໄຫວສືບຕໍ່ກິດຈະການ, ໂຄງການລົງທຶນໃໝ່ຂອງເອກະຊົນສ່ວນໃຫຍ່ ຍັງຢູ່ໃນຂັ້ນຕອນການສຳຫລວດ, ບັນດາຫົວໜ່ວຍທຸລະກິດ ພົບຄວາມຫຍຸ້ງຍາກດ້ານໜີ້ສິນ ແລະ ການເງິນ, ການເກັບລາຍຮັບ ບໍ່ໄດ້ຕາມແຜນການ; ເຊິ່ງໃນຊຸມປີຜ່ານມາ ແຂວງເຄີຍມີລາຍຮັບເກີນດຸ່ນ ຈາກການຂຸດຄົ້ນ ແລະສົ່ງອອກວັດຖຸດິບຈາກທຳມະຊາດ, ປະຈຸບັນກາຍເປັນແຂວງຂາດດຸ່ນ; ພ້ອມນັ້ນ ສະພາບດ້ານຫຍໍ້ທໍ້ໃນສັງຄົມ ກໍຍັງສືບຕໍ່ເກີດຂຶ້ນ ເປັນຕົ້ນ: ການລັກລອບຂຸດຄົ້ນໄມ້, ຫີນອ່ອນ, ຄຳ... ລຽບຕາມບໍລິເວນຊາຍແດນ ຍັງເປັນຂະບວນ, ການຊື້-ຂາຍຢາເສບຕິດ, ຂີ້ລັກງັດແງະ, ການຄຸ້ມຄອງຄົນເຂົ້າ-ອອກເມືອງ ຜິດກົດໝາຍ, ແຮງງານຜິດກົດໝາຍ, ໂດຍສະເພາະ ແມ່ນແຮງງານຕ່າງປະເທດ ກວດເຫັນຢ່າງຫລວງຫລາຍ, ຄວາມບໍ່ສະຫງົບໃນເຂດຊາຍແດນ ແລະ ອື່ນໆ; ການຈັດຕັ້ງປະຕິບັດຄຳສັ່ງເລກທີ 15/ນຍ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

ຈາກສະພາບຄວາມເປັນຈິງດັ່ງກ່າວ ອົງການປົກຄອງແຂວງ ໄດ້ມີຄວາມພະຍາຍາມສົມທົບທຸກກຳລັງແຮງທີ່ມີ, ການຮ່ວມມືກັບພາກສ່ວນຕ່າງໆ ພ້ອມກັນຊອກທຸກວິທີທາງອອກ ເພື່ອໃຫ້ສອດຄ່ອງ ແລະ ທັນກັບສະພາບທີ່ເກີດຂຶ້ນເປັນຕົ້ນ: ແຂວງເຫັນໄດ້ທ່າແຮງໃໝ່ ໃນການສ້າງລາຍຮັບ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍການສົ່ງເສີມປະຊາຊົນໄປອອກແຮງງານນຳໂຄງການລົງທຶນຂອງຕ່າງປະເທດ; ໄດ້ວາງທິດ ດ້ວຍການທັນເອົາການນຳຂອງແຂວງ, ພະແນກການ ແລະ ພະນັກງານກ່ຽວຂ້ອງ ລົງແກ້ໄຂສະພາບການ ໃຫ້ສະຫງົບລົງໃນຂັ້ນພື້ນຖານ.

ເພື່ອຮັບປະກັນການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານຮອບດ້ານຂອງອົງການປົກຄອງແຂວງ ໃນໄລຍະ 6 ເດືອນທ້າຍປີ 2017 ຊຶ່ງໄດ້ເປັນເອກະພາບຮັບຮອງເອົາວຽກງານຈຸດສຸມຈຳນວນໜຶ່ງ ດັ່ງນີ້:

1. ຢຸດຕິການເຄື່ອນໄຫວ ແລະ ຖອນພາຫະ, ອຸປະກອນຕ່າງໆ ຈາກການສຳຫຼວດ-ຂຸດຄົ້ນຄຳ ຂອງສະຫະບໍລິສັດ ລາວບໍລິການ ທີ່ມີສັນຍາຮ່ວມກັບກົມທໍລະນີສາດ-ແຮ່ທາດ ກະຊວງພະລັງງານ ແລະ ບໍ່ແຮ່ ຢູ່ເຂດນ້ຳຊອນ ເມືອງພູວົງ. ເນື່ອງຈາກການສຳຫລວດດັ່ງກ່າວ ແຂວງບໍ່ທັນໄດ້ຮັບມະຕິກຳຈາກລັດຖະບານ, ເຮັດໃຫ້ມີຊ່ອງຫວ່າງການສວຍໃຊ້ໂອກາດຂອງກຸ່ມຄົນບໍ່ດີເຂົ້າລັກລອບ ແລະ ສ້າງຄວາມບໍ່ສະຫງົບ ( ໃຫ້ລໍຖ້າຈົນກວ່າລັດຖະບານ ໄດ້ມີການຕົກລົງເຫັນດີ ຈຶ່ງສາມາດຈັດຕັ້ງປະຕິບັດໂຄງການດັ່ງກ່າວ ). ວຽກນີ້ມອບໃຫ້ຫ້ອງວ່າການແຂວງ ເປັນຜູ້ຮ່າງຄຳສັ່ງດັ່ງກ່າວ ເພື່ອຈັດຕັ້ງປະຕິບັດ.

2. ຢຸດຕິການເຄື່ອນໄຫວການສຳຫຼວດ-ອອກແບບທາງລຽບຕາມບໍລິເວນຊາຍແດນ ລາວ-ຫວຽດນາມ ຂອງບໍລິສັດ ລາດຊະວົງ ( ທ່ານ ກິມ ) ແລະ ໃຫ້ຖອນພາຫະນະກົນຈັກອອກມາທັງໝົດ, ເນື່ອງຈາກແຂວງບໍ່ທັນໄດ້ຮັບມະຕິກຳການອະນຸຍາດຈາກລັດຖະບານ, ຊຶ່ງການປະຕິບັດຜ່ານມາ ຍັງມີຊ່ອງຫວ່າງຂອງກຸ່ມຄົນບໍ່ດີເຂົ້າລັກລອບຕັດໄມ້, ສ້າງຄວາມບໍ່ສະຫງົບໃນຂອບເຂດດັ່ງກ່າວ ( ໃຫ້ລໍຖ້າຈົນກວ່າລັດຖະບານໄດ້ມີການຕົກລົງເຫັນດີ ຈຶ່ງສາມາດຈັດຕັ້ງປະຕິບັດໂຄງການດັ່ງກ່າວ ). ວຽກນີ້ມອບໃຫ້ຫ້ອງວ່າການແຂວງ ເປັນຜູ້ຮ່າງຄຳສັ່ງດັ່ງກ່າວ ເພື່ອຈັດຕັ້ງປະຕິບັດ.

3. ສືບຕໍ່ເພີ່ມທະວີໃນການຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໂດຍເລັ່ງໃສ່ປັບປຸງ ແລະ ກໍ່ສ້າງກຳລັງ ໃຫ້ໜັກແໜ້ນເຂັ້ມແຂງ, ສາມາດຕອບສະໜອງກັບຄວາມຮຽກຕ້ອງການໃນໄລຍະໃໝ່ ເປັນຕົ້ນ: ກຳລັງທີ່ເຮັດໜ້າທີ່ປ້ອງກັນຊາຍແດນ, ບັນດາດ່ານສາກົນ ແລະ ທ້ອງຖິ່ນ, ບັນດາພາກສ່ວນວິຊາສະເພາະທີ່ຈຳເປັນຮີບດ່ວນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດ 4 ວາລະໃຫຍ່ຂອງແຂວງ ໃຫ້ມີຜົນສຳເລັດ. ວຽກນີ້ມອບໃຫ້ກອງບັນຊາການ ປກຊ, ກອງບັນຊາການ ປກສ, ຄະນະສະເພາະກິດແກ້ໄຂຊາຍແດນ, ພະແນກກະສິກຳ-ປ່າໄມ້ແຂວງ, ພະແນກແຮງງານ ແລະ ສະ ຫວັດດີການສັງຄົມແຂວງ ເປັນເຈົ້າການ.

4. ສືບຕໍ່ເອົາໃຈໃສ່ແກ້ໄຂການປະກອບອາຊີບ ແລະ ການຈັບຈອງ, ຊື້-ຂາຍດິນ ຂອງຄົນຕ່າງດ້າວ, ຄົນຕ່າງປະເທດ ໃຫ້ເຂົ້າສູ່ລະບຽບກົດໝາຍ ຢ່າງເຂັ້ມງວດ. ວຽກນີ້ມອບໃຫ້ຄະນະທີ່ຖືກແຕ່ງຕັ້ງສົມທົບກັບບັນດາເມືອງ ເພື່ອໃຫ້ມັນລະອຽດ, ອັນໃດຈະມອບໃຫ້ເມືອງຂາດຕົວ.

5. ສຸມໃສ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ 2017 ໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້; ດຳເນີນການສະຫລຸບຕີລາຄາກາງສະໄໝ ຕາມມະຕິກອງປະຊຸມໃຫຍ່ ຄັ້ງທີ X ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII ແລະ ແຜນງົບປະມານ ປີ 2018, ສະເໜີແຜນລົງທຶນຂອງລັດປີ 2018 ເພື່ອນຳສະເໜີຕໍ່ສະພາປະຊາຊົນແຂວງ ( ກ່ອນສະເໜີຫາສະພາແຫ່ງຊາດ ); ຊຸກຍູ້ການສ້າງສຳມະໂນທີ່ດິນຢູ່ 5 ເມືອງ, ການຈັດເກັບລາຍຮັບເຂົ້າງົບປະມານ ໃຫ້ໄດ້ຕາມແຜນການ, ປະຕິບັດແຜນລາຍຈ່າຍງົບປະມານຕາມແຜນການອະນຸມັດຂອງລັດຖະບານຢ່າງມີການປະຢັດ ແລະ ເຂັ້ມງວດ, ບໍ່ອະນຸມັດຈ່າຍນອກແຜນເດັດຂາດ; ຖືບູລິມະສິດການເບີກຈ່າຍເງິນ, ເງິນອຸດໜູນ ແລະ ເງິນບໍລິຫານໃຫ້ໄດ້ປົກກະຕິ; ຄຸ້ມຄອງການຂຸດຄົ້ນເຄື່ອງປ່າຂອງດົງຕາມໂກຕ້າທີ່ລັດຖະບານອະນຸມັດ, ການຄຸ້ມຄອງປ່າໄມ້ ໃນໄລຍະການປິດປ່າ ໃຫ້ເຂັ້ມງວດ, ຄຸ້ມຄອງການປັບປຸງ ແລະ ດັດສົມໂຮງງານປຸງແຕ່ງໄມ້ ໃຫ້ຖືກຕ້ອງ

ສອດຄ່ອງຕາມລະບຽບກົດໝາຍ; ເອົາໃຈໃສ່ຕິດຕາມ, ຊຸກຍູ້ການຜະລິດເຂົ້ານາປີ ໃຫ້ທ່ວງທັນກັບລະດູການ, ຕິດຕາມເຝົ້າລະວັງການລະບາດຂອງສັດຕູພືດ-ສັດລ້ຽງ ໃຫ້ສາມາດຮັບມື ແລະ ແກ້ໄຂທັນເວລາ; ເອົາໃຈໃສ່ຕິດຕາມການປ່ຽນແປງຂອງສະພາບດິນຟ້າອາກາດ ເພື່ອແຈ້ງເຕືອນປະ ຊາຊົນ ພ້ອມກັນກະກຽມຮັບມືກັບເຫດການທີ່ອາດຈະເກີດຂື້ນທັນເວລາ, ວຽກນີ້ມອບໃຫ້ພາກສ່ວນກ່ຽວຂ້ອງ ນໍາໄປຈັດຕັ້ງປະຕິບັດວຽກຂອງໃຜລາວ.

6. ສືບຕໍ່ຕິດຕາມທຸກຄໍາສະເໜີຂອງແຂວງຕໍ່ລັດຖະບານ ໃນການຂໍທິດແກ້ໄຂບັນຫາບໍ່ຫີນແຫ່ງໃໝ່, ການປະມູນ-ຊື້ຂາຍໄມ້ທີ່ຍັງຄ້າງ, ການສະເໜີຂໍສົ່ງອອກໄມ້ວິເນຍຂອງບໍລິສັດ ເຊັນເຈີລີ, ການຂໍອະນຸມັດຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ໃນຂອບເຂດໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າກົງ 3 ແລະ ໂຄງການກໍ່ສ້າງແລວສາຍສົ່ງໄຟຟ້າແຮງສູງ 230 ກວ; ພ້ອມນີ້ ກໍ່ຈະໄດ້ມີການຕິດຕາມກວດກາຄືນບັນດາ ນິຕິກໍາລຸ່ມກົດໝາຍຂອງລັດຖະບານ, ຄໍາເຫັນຊີ້ນໍາຂອງນາຍົກລັດຖະມົນຕີ ໃນການແກ້ໄຂບັນຫາຕ່າງໆ ໃນໄລຍະຜ່ານມາ. ວຽກນີ້ມອບໃຫ້ຫ້ອງວ່າການແຂວງ ເປັນເຈົ້າການ.

7. ສືບຕໍ່ດໍາເນີນກົນໄກປະສານງານຂອງ 4 ເສົາຄໍ້າ ເຊັ່ນ: ອົງການລັດບໍລິຫານ, ຜູ້ສະໜອງແຫລ່ງທຶນ, ຜູ້ເຮັດການຜະລິດ ແລະ ການຕະຫລາດ ເພື່ອຂັບເຄື່ອນການຜະລິດກະສິກໍາເປັນສິນຄ້າ ໃຫ້ເປັນຮູບປະທໍາທີ່ສົມບູນ, ເຮັດໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ ແລະ ແຫລ່ງລາຍຮັບແກ່ງົບປະມານທີ່ຖາວອນ. ວຽກນີ້ມອບໃຫ້ຄະນະຂັບເຄື່ອນເສດຖະກິດເປັນເຈົ້າການ.

8. ດໍາເນີນການປະເມີນຄືນກ່ຽວກັບຄວາມທຸກຍາກຂອງປະຊາຊົນ ແລະ ຄອບຄົວທຸກຍາກໃນທົ່ວແຂວງ ເພື່ອໃຫ້ແທດເໝາະກັບຕົວຈິງ. ວຽກນີ້ມອບໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ ( ຂະແໜງພັດທະນາຊົນນະບົດ ) ເປັນເຈົ້າການ.

9. ດໍາເນີນການແກ້ໄຂຜົນການກວດສອບ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ການຄຸ້ມຄອງບໍລິຫານລັດທີ່ດີ. ວຽກນີ້ມອບໃຫ້ພະແນກກວດກາລັດ ເປັນເຈົ້າການ.

10.ເອົາໃຈໃສ່ການໂຄສະນາປຸກລະດົມ ແລະ ຊີ້ແຈງໃຫ້ພະນັກງານ, ທະຫານ, ຕໍາຫລວດ ແລະ ປະຊາຊົນ ເຂົ້າຮ່ວມໃນການສໍາຫລວດ ແລະ ອອກໃບຕາດິນ ໂດຍຈະມອບໃຫ້ຄະນະໂຄສະນາອົບຮົມແຂວງ ສົມທົບກັບພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ ເປັນເຈົ້າການໃນການຈັດຕັ້ງປະຕິບັດຕົວຈິງ. ວຽກນີ້ມອບໃຫ້ຄະນະໂຄສະນາອົບຮົມແຂວງເປັນເຈົ້າການ.

11. ດໍາເນີນການກວດກາປະເມີນຜົນ ແລະ ເກັບກູ້ໜີ້ສິນ ກອງທຶນພັດທະນາບ້ານ ແລະ ກອງທຶນຜະລິດເປັນສິນຄ້າ. ວຽກນີ້ມອບໃຫ້ຄະນະຮັບຜິດຊອບທີ່ຖືກແຕ່ງຕັ້ງເປັນເຈົ້າການ.

12.ເອົາໃຈໃສ່ໃນການຄັດເລືອກຊັບຊ້ອນນັກຮຽນທີ່ເສັງຈົບຊັ້ນມັດທະຍົມຕົ້ນ, ມັດທະຍົມຕອນປາຍ ເພື່ອສົ່ງເຂົ້າຮຽນວິຊາຊີບຢູ່ແຂວງ, ນັກສຶກສາຕໍ່ວິຊາສະເພາະຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ຖືກຕ້ອງ ແລະ ຫລີກລຽງບັນຫາທາງສຽງທີ່ບໍ່ດີ. ວຽກນີ້ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງເປັນເຈົ້າການ.

13.ກະກຽມຄວາມພ້ອມໃນການສະກັດກັ້ນ, ຕອບດ້ານກັບພະຍາດອາດຈະເກີດຂື້ນຕາມລະດູການ ໃຫ້ມີຜົນກະທົບໜ້ອຍທີ່ສຸດ. ວຽກນີ້ມອບໃຫ້ພະແນກສາທາແຂວງ ເປັນເຈົ້າການ.

14.ການນຳຂອງແຂວງ ສືບຕໍ່ລົງໃກ້ຊິດຕິດແທດກັບປະຊາຊົນ, ຕິດພັນກັບການຊຸກຍູ້-ສົ່ງເສີມການຜະລິດ, ເກັບກຳຂໍ້ມູນຈາກປະຊາຊົນ ເພື່ອຈະແກ້ໄຂບັນຫາຂອງປະຊາຊົນ ໃຫ້ຖືກຕາມຄວາມເປັນຈິງ. ວຽກນີ້ມອບໃຫ້ຫ້ອງວ່າການແຂວງ ເປັນເຈົ້າການສ້າງແຜນໃຫ້ການນຳ.

15.ສືບຕໍ່ສືບຕໍ່ປັບປຸງກົນໄກການປະສານງານ ແລະ ແບ່ງຂັ້ນຄຸ້ມຄອງຕາມທິດສາມສ້າງ, ຜັນຂະຫຍາຍຄຳສັ່ງ 34/ນຍ ເປັນນິຕິກຳລະອຽດ ແລະ ໃຫ້ໄດ້ນຳໄປຈັດຕັ້ງປະຕິບັດ ໂດຍໄວ, ຕິດພັນກັບການລົງກໍ່ສ້າງຮາກຖານຂອງການນຳ ແລະ ຂະແໜງການທີ່ກ່ຽວຂ້ອງ ຂອງແຂວງ, ຕາມຈຸດສຸມບູລິມະສິດ ເພື່ອແກ້ໄຂຢູ່ແຕ່ລະເມືອງ ໃຫ້ຄະນະນຳຂອງແຂວງເປັນຫົວໜ້າ, ຄະນະນຳພາພະແນກການ ແລະ ກົມກອງກ່ຽວຂ້ອງ ລົງໄປແກ້ໄຂຕົວຈິງຕາມແຕ່ລະເປົ້າໝາຍ. ວຽກນີ້ມອບໃຫ້ພະແນກພາຍໃນແຂວງ ເປັນເຈົ້າການ.

16.ສືບຕໍ່ແກ້ໄຂບັນຫາຄວາມບໍ່ສະອາດຂອງຕົວເມືອງ, ແກ້ໄຂບັນຫານ້ຳອັ່ງ, ນ້ຳຂັງ ດ້ວຍການປະກອບສ່ວນການຈັດຕັ້ງທຸກພາກສ່ວນ ແລະ ປະຊາຊົນ. ວຽກນີ້ມອບໃຫ້ເມືອງສາມັກຄີໄຊ ແລະ ອົງການ ອພບຕ ເມືອງ ເປັນເຈົ້າການ.

17.ສືບຕໍ່ປະຕິບັດບົດບັນທຶກສັນຍາ ແລະ ການຮ່ວມມືກັບບັນດາແຂວງຂອງ ສສ ຫວຽດນາມ, ລາຊະອານາຈັກກຳປູເຈຍ ໂດຍສຸມໃສ່ຕິດຕາມ, ຊີ້ນຳການແກ້ໄຂບັນຫາທີ່ເກີດຂຶ້ນໃນເຂດຊາຍຄົງຄ້າງມິດຕະພາບ ລາວ-ກຳປູເຈຍ, ໂຄງການຮ່ວມມືກັບຣາຊາອະນາຈັກໄທ ແລະ ບັນດາເພື່ອນມິດສາກົນໃຫ້ ມີປະສິດທິຜົນດີຂຶ້ນກວ່າເກົ່າ. ວຽກນີ້ມອບໃຫ້ພະແນກການຕ່າງປະເທດແຂວງ ແລະ ພະແນກແຜນການ ແລະ ການລົງທຶນ ສົມທົບກັນຜັນຂະຫຍາຍ ແລະ ຕິດຕາມການປະເມີນຜົນ.

18.ສືບຕໍ່ອຳນວຍຄວາມສະດວກໃຫ້ແກ່ການສະເໜີລົງທຶນຂອງຕ່າງປະເທດ, ພິຈາລະນາການອະນຸຍາດລົງທຶນໃຫ້ມີປະສິດທິຜົນສູງ ຕິດພັນກັບການຕິດຕາມ, ຄຸ້ມຄອງການລົງທຶນຂອງຕ່າງປະເທດ ໃຫ້ດຳເນີນຖືກຕ້ອງ, ໂດຍສະເພາະ ແມ່ນປະຊາຊົນທີ່ໄປອອກແຮງງານນຳໂຄງການໃຫ້ໄດ້ຮັບການຄຸ້ມຄອງຕາມກົດໝາຍ. ວຽກນີ້ມອບໃຫ້ພະແນກແຜນການ ແລະ ການລົງທຶນແຂວງ, ພະແນກແຮງງານ ເປັນເຈົ້າການ.

19.ມອບໃຫ້ພະແນກການເງິນແຂວງປັບປຸງຮ່າງຄຳສັ່ງແນະນຳ ວ່າດ້ວຍການກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງແຂວງ, ແລ້ວຈຶ່ງລາຍງານຕໍ່ກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ພິຈາລະນາຕົກລົງ. ສ່ວນແຜນດຳເນີນງານຂອງອົງການປົກຄອງແຂວງ ມອບໃຫ້ຫ້ອງວ່າການແຂວງປັບປຸງ ແລະ ສ້າງແຜນການເຄື່ອນໄຫວໃຫ້ການນຳ ເປັນແຕ່ລະໄລຍະທີ່ສອດຄ່ອງກັບມະຕິ.

ກອງປະຊຸມອົງການປົກຄອງແຂວງ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2017 ໄດ້ດຳເນີນມາຮອດເວລາ 11:30 ໂມງ ຂອງວັນທີ 21 ມິຖຸນາ 2017 ໄດ້ປິດລົງຢ່າງເປັນທາງການ ດ້ວຍຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

23.6.2017

ຕ.ຄະນະອົງການປົກຄອງແຂວງ

ເຈົ້າແຂວງ

ປອ ນາມ ວິຍະເກດ